**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມຄຸ້ມຄອງຊັບສິນແຫ່ງລັດ

ເລກທີ 4240 /ຄຊລ

ນະຄອນຫຼວງວຽງຈັນ, ວັນທີ 29 ພຶດສະພາ 2025

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງຊັບສິນ ແຫ່ງລັດ ສະບັບເລກທີ 6199/ກງ, ລົງວັນທີ 16 ທັນວາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້ພາຫະນະຮັບໃຊ້ວິຊາສະເພາະຂອງເຈົ້າໜ້າທີ່ຊັບສິນແຫ່ງລັດ ສະບັບເລກກທີ 1582/ກງ, ລົງວັນທີ 27 ພຶດສະພາ 2025.

1. ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໄດ້ຮັບອະນຸມັດງົບປະມານຄັງລັດຖະການຊັບສິນຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອຈັດຊື້ ໂດຣນ 2 ໜ່ວຍເພື່ອລາດຕະເວນ ແລະ ຈັດຊື້ຄອມພິວເຕີ surface ຈຳນວນ 09 ເຄື່ອງ;
2. ຂໍເຊີນບັນດາບໍລິສັດ ທີ່ມີຄວາມເໝາະສົມ ເຂົ້າຮ່ວມຍື່ນຊອງປະມູນແບບເປີດກ້ວາງສຳລັດການຈັດຊື້ໂດຣນ 2 ໜ່ວຍເພື່ອລາດຕະເວນ ແລະ ຈັດຊື້ຄອມພິວເຕີ surface ຈຳນວນ 09 ເຄື່ອງໃນການເຄື່ອນໄຫວວຽກງານຂອບເຂດທົ່ວປະເທດ. ກຳນົດໄລຍະມອບ-ຮັບແມ່ນ 20 ວັນ;
3. ການປະມູນ ດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງ ລາຄາຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ບັນດາບໍລິສັດທີ່ມີຄຸນວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ທີ່ຕັ້ງຢູ່: ບ້ານໂພນໄຊ, ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ, ເບີໂທ: 02077885555, 020 28999891 ເລີ່ມຂາຍຊອງແຕ່ວັນທີ 29 ພຶດສະພາ 2025 ເປັນຕົ້ນໄປ, ໃນລາຄາ 2,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນ **10:00 ໂມງ**, ຂອງວັນທີ 18 ມິຖຸນາ 2025 ທີ່ກົມຄຸ້ມຄອງຊັບສິນແຫ່ງລັດກະຊວງການເງິນ ແລະ ຊອງຈະໄດ້ເປີດໃນເວລາ **10:00 ໂມງ, ຂອງວັນທີ 18 ມິຖຸນາ 2025** ໂດຍຊ່ອງໜ້າຄະນະຈັດຊື້.
6. ທຸກຊອງປະມູນຕ້ອງປະກອບເອກະສານຕາມເງື່ອນໄຂທີ່ໄດ້ກຳນົດໃນຊຸດເອກະສານປະມູນຢ່າງຄົບຖ້ວນ.

**ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ**

**ຕາງໜ້າຄະນະຮັບຜິດຊອບຈັດຊື້**

ກະຊວງການເງິນ ກົມຄຸ້ມຄອງຊັບສິນແຫ່ງລັດ

ພຸດທະສິນ ເຮືອງທະວົງ

Mr.Phouthasinh HEANGTHAVONG